## ຄວາມເປັນມາ

ສູນພັດທະນາຊົນນະບົດ(ສພບ) ສ້າງຕັ້ງຂຶ້ນບົນພື້ນຖານທີ່ ໄດ້ຮັບແຮງບັນດານໃຈມາຈາກການເຮັດວຽກດ້ານການ ພັດທະນາຊຸມຊົນຮ່ວມກັບຫລາຍອົງການຈັດຕັ້ງພາກລັດ ແລະ ເອກະຊົນ. ໃນປີ 2009 ສູນອົບຮົມຮ່ວມພັດທະນາ ໄດ້ເປີດໂອກາດໃຫ້ພະນັກງານໜຸ່ມນ້ອຍໄດ້ລອງຜິດລອງ ແມ່ນໃນການສ້າງຕັ້ງສູນຊື່ວ່າ ສູນຮຽນຮູ້ສ່ວນໄມ້ລາວ ເຊິ່ງ ເປັນສູນສາທິດດ້ານການຟື້ນຟູປ່າ ແລະ ລະບົບນິດເວດ ໃນເນື້ອທີ່ 14 ແຮັກຕາ ຕັ້ງຢູ່ບ້ານ ສ້າງຫົວບໍ່ ເມືອງໄຊ ທານີ ນະຄອນຫລວງວຽງຈັນ. ການດຳເນີນວຽກງານຂອງ ສູນຮຽນຮູ້ສວນໄມ້ລາວດຳເນີນມາໄດ້ດ້ວຍດີ ຈົນຮອດປີ 2014 ທີມງານຜູ້ບໍລິຫານ ແລະພະນັກງານເຫັນວ່າວຽກ ຂອງສູນແມ່ນມີການຂະຫຍາຍຕົວຂຶ້ນດັ່ງນັ້ນຈຶ່ງໄດ້ຕົງລົງ ກັນສານຕໍ່ເຈດຕະນາລົມທີ່ຈະສ້າງເປັນອົງກອນ ເພື່ອຮັບ ໃຊ້ສັງຄົມແບບກວ້າງຂວາງ, ດ້ວຍເຫດນັ້ນຈຶ່ງກາຍມາເປັນ ສູນພັດທະນາຊົນນະບົດ(ສພບ) ທີ່ມີວິໄສທັດ, ພາລະກິດ, ເປົ້າໝາຍ ແລະ ຈຸດປະສົງສະເພາະຂອງພວກເຮົາເອງຢ່າງ ເປັນທາງການໃນປີ 2015.




ຖະໜົນມິດຕະພາບລາວ-ໄທ ບ້ານວັດນາກ,ໜ່ວຍ 15 ເມືອງສີສັດຕະນາກ,

ນະຄອນຫລວງວຽງຈັນ, ສ.ປ.ປ ລາວ

Lao-Thai Friendship Rd, Unit 15 Vatnak village, Sisathanak
District Vientiane Capital, Laos.
Tel & Fax: (856-21) 315457
E-mail: info@rda.org.la & Website: www.rda.org.la


# ສູນພັດທະນາຊົນນະບົດ (ສພບ)

*Rural Development Agency (RDA)*



**ວິໄສທັດຂອງພວກເຮົາແມ່ນ:** ເປັນສູນຕົ້ນແບບທີ່ສ້າງແຮງຈູງໃຈ ແລະເສີມສ້າງຄວາມອາດສາມາດດ້ານການພັດທະນາຊຸມຊົນແບບຮອບດ້ານ.

**ພາລະກິດ:** ເອື້ອອຳນວຍການເສີມສ້າງຂີດຄວາມສາມາດແບບບູລະນາການ ແລະ ຮັບປະກັນຄຸນນະພາບຂອງການບໍລິການດ້ານການໂຄສະນາສຶກສາຊຸມຊົນ, ສິ່ງແວດລ້ອມ ແລະ ການປັບປຸງຊີວິດການເປັນຢູ່.

**ເປົ້າໝາຍ**: ສົ່ງເສີມ ແລະ ສ້າງບຸກຄະລາກອນດ້ານການສົ່ງເສີມການພັດທະນາຊຸມຊົນໃຫ້ມີທັກສະຄວາມສາມາດ, ມັກຮັກໃນອາຊີບ ແລະ ເປັນຕົວແບບທີ່ໄດ້ຮັບການຍອມຮັບ ຈາກສັງຄົມ ແລະ ຊຸມຊົນຂອງເຂົາເຈົ້າເອງ.





## 3 ແຜນງານຂອງ ສພບ:

### *ແຜນງານການສຶກສາຊຸມຊົນ:*

ສ້າງ ແລະ ຝຶກອາສາສະໝັກໄວໜຸ່ມໃນ ແລະ ນອກໂຮງຮຽນ, ວຽກງານຝຶກອົບຮົມຄູຝຶກເພື່ອການພັດທະນາຊຸມຊົນ, ວຽກງານສ້າງຄວາມອາດສາມາດດ້ານສັງຄົມ-ເສດຖະກິດໃຫ້ກັບຊຸມຊົນ

### *ແຜນງານປັບປຸງຊີວິດການເປັນຢູ່ຂອງຊຸມຊົນ:*

ວຽກງານສ້າງລາຍຮັບໃຫ້ກັບຊຸມຊົນ(ທຸລະກິດຄອບຄົວ), ວຽກງານດ້ານສະບຽງອາຫານ ແລະ ໂພສະນາການ, ການຕະຫລາດແບບຜູ້ຜະລິດ ແລະ ຜູ້ບໍລິໂພກຮູ້ຈັກຄຸນຄ່າເຊິ່ງກັນ ແລະ ກັນ

### *ແຜນງານສິ່ງແວດລ້ອມ:*

ວຽກງານຊຸມຊົນ ແລະ ໂຮງຮຽນ ເປັນເຈົ້າການດ້ານສຸຂະອະນາໄມ(ຊຈສ ແລະ ຮຈສ), ວຽກງານການຈັດການຂີ້ເຫຍື້ອ ແລະ ສິ່ງເສດເຫລືອ, ການສຶກສາສິ່ງແວດລ້ອມ, ການອານຸລັກ ແລະ ສົ່ງເສີມຊີວະນາໆພັນ

**ວົງ ຈອນ ການ ຮຽນ ຮູ້**




ສູນພັດທະນາຊົນນະບົດ, **ອົງກອນແຫ່ງການຮຽນຮູ້** ແມ່ນເປົ້າໝາຍຂອງພວກເຮົາທີ່ມຸ່ງານທີ່ມີຮ່ວມກັນ, ອົງກອນແຫ່ງການຮຽນຮູ້ ຫລື Learning Organization ທີ່ປະກອບດ້ວຍຫລາຍປັດໃຈທີ່ພວກເຮົາທຸກຄົນໃນອົງກອນໄດ້ເອົາໃຈໃສ່ພັດທະນາໃຫ້ມັນເກີດຂຶ້ນໃນເລື່ອງການ ສ້າງພາວະການເປັນຜູ້ນຳ, ສ້າງໃຫ້ການແລກປ່ຽນວິໄສທັດໄດ້ເກີດຂຶ້ນ, ຈັດລະບົບຄວາມຄິດ, ຄິດແບບເຊື່ອມໂຍງ, ຊອກຮຽນຮູ້ດ້ວຍຕົນເອງ, ຊອກຮຽນຮູ້ແບບໝູ່ຄະນະ, ສື່ສານແບບເຊື່ອມສາຍສຳພັນ ແລະ ການສ້າງສະພາບແວດລ້ອມພາຍໃນອົງກອນທີ່ເອື້ອອຳນວຍໃນການປະຕິບັດວຽກງານ.

